ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຄົມມະນາຄົມຂົນສົ່ງ ເລກທີ 118./ຄຂປກ

ໄປສະນີ ແລະ ກໍ່ສ້າງ ວັນທີ 12 JAN 2006

# ຂໍ້ກຳນົດ

## ຂອງລັດຖະມົນຕີວ່າການກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ

## ກ່ຽວກັບແບບແຜນວິທີເຮັດວຽກຂອງຄະນະກຳມະການຂົນສົ່ງແຫ່ງຊາດ

- ອີງໃສ່ດຳລັດຂອງນາຍຍົກລັດຖະມົນຕີສະບັບເລກທີ 66/ນຍ ລົງວັນທີ່ 20 ພຶດສະພາ 1999 ວ່າດ້ວຍການຈັດຕັ້ງແລະເຄື່ອນໄຫວຂອງກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ;
- ອີງໃສ່ ມາດຕາ 7 ດຳລັດຂອງນາຍົກລັດຖະມົນສະບັບເລກທີ03/ນຍ, ລົງວັນທີ 28 ມັງກອນ 2002 ວ່າດ້ວຍການກຳນົດແບບແຜນວິທີເຮັດວຽກຂອງຄະນະກຳມະການຂົນສົ່ງແຫ່ງຊາດ ແລະ ໜ້າທີ່ຂອງກອງເລຂາຄະນະກຳມະການດັ່ງກ່າວ;
- ອີງຕາມການສະເໜີຂອງຄະນະກຳມະການຂົນສົ່ງແຫ່ງຊາດ.

## ໝວດທີ I

## ຂໍ້ກຳນົດທົ່ວໄປ

**ມາດຕາ 1: ຈຸດປະສົງ.**

ຂໍ້ກຳນົດສະບັບນີ້ວາງອອກເພື່ອຜັນຂະຫຍາຍແບບແຜນວິທີເຮັດວຽກ ຂອງຄະນະກຳມະການຂົນສົ່ງແຫ່ງຊາດແລະ ໜ້າທີ່ຂອງກອງເລຂາຂອງຄະນະກຳມະການດັ່ງກ່າວ ຕາມທີ່ໄດ້ລະບຸໄວ້ໃນມາດຕາທີ່ 7 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 03/ນຍ ລົງວັນທີ 28 ມັງກອນ 2002 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຂົນສົ່ງແຫ່ງຊາດ.

**ມາດຕາ2: ແບບແຜນວິທີເຮັດວຽກລະອຽດຂອງຄະນະກຳມະການຂົນສົ່ງແຫ່ງຊາດ.**

ຄະນະກຳມະການຂົນສົ່ງແຫ່ງຊາດເປັນອົງການຈັດຕັ້ງບໍ່ປະຈຳການປະຕິບັດໜ້າທີ່ຮັບຜິດຊອບ ແລະ ຂອບເຂດສິດຕາມທີ່ໄດ້ກຳນົດໄວ້ໃນໝວດ 2 ຂອງດຳລັດ ເລກທີ່ 03/ນຍ, ລົງວັນທີ 28/01/2002, ໂດຍກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດຊຶ່ງມີຫ້ອງການກອງເລຂາຕັ້ງຢູ່ກົມຂົນສົ່ງ, ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນເສນາທິການໃນການວາງແຜນ, ການຄົ້ນຄ້ວາ, ການກຳນົດ ແລະ ການສະເໜີ ບັນຫາຕ່າງໆທີ່ກ່ຽວຂ້ອງດ້ານການຂົນສົ່ງເຂົ້າວາລະກອງປະຊຸມຂອງຄະນະກຳມະການຂົນສົ່ງແຫ່ງຊາດ.

## ໝວດທີ II

## ໜ້າທີ່ຮັບຜິດຊອບ ແລະ ຂອບເຂດສິດຂອງປະທານ, ຮອງປະທານ ແລະ ກຳມະການ

**ມາດຕາ 3: ປະທານຂອງຄະນະກຳມະການການຂົນສົ່ງແຫ່ງຊາດມີໜ້າທີ່ ແລະ ຂອບເຂດສິດ ຕົ້ນຕໍດັ່ງນີ້:**

3.1 ຊີ້ນຳກອງເລຂາໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ຕາມຫນ້າທີ່ ແລະ ຂອບເຂດສິດຂອງຄະນະກຳມະການຂົນສົ່ງແຫ່ງຊາດຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 3 ແລະ ມາດຕາ 4 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ່ 03/ນຍ ລົງວັນທີ28 ມັງກອນ 2002;

3.2 ຮຽກປະຊຸມ ແລະ ເປັນປະທານກອງປະຊຸມສາມັນ;

3.3 ພິຈາລະນາຄຳຮ້ອງຂໍເປີດກອງປະຊຸມວິສາມັນຕາມການສະເໜີຂອງກຳມະການ;

3.4 ຊີ້ນຳການຈັດຕັ້ງປະຕິບັດວຽກງານຕາມມະຕິ ຫຼື ແຜນການທີ່ກອງປະຊຸມສາມັນແລະວິສາມັນຮັບຮອງເອົາ;

3.5 ມອບໝາຍຫນ້າທີ່ວຽກງານໃຫ້ຮອງປະທານແຕ່ລະທ່ານ ຊ່ວຍຊີ້ນຳການຈັດຕັ້ງປະຕິບັດ. ໃນກໍລະນີທີ່ຕິດຂັດວຽກງານອັນຈຳເປັນ, ປະທານຕ້ອງມອບໝາຍໃຫ້ຮອງປະທານຜູ້ຢູ່ຖັດນັ້ນ ເປັນຜູ້ຮັບຜິດຊອບວຽກງານແທນຊົ່ວຄາວ;

3.6 ແຕ່ງຕັ້ງກຳມະການທ່ານໃດທ່ານໜຶ່ງ ເຂົ້າຮ່ວມກອງປະຊຸມທີ່ກ່ຽວຂ້ອງກັບກັບຂະແໜງວຽກງານຂອງຕົນ ນຳອົງການຈັດຕັ້ງຕ່າງໆ ທັງຢູ່ພາຍໃນ ແລະ ຕ່າງປະເທດ;

3.7 ລາຍງານຜົນຂອງການດຳເນີນງານປະຈຳງວດ ແລະ ປະຈຳປີ ຂອງຄະນະກຳມະການຂົນສົ່ງແຫ່ງຊາດຕໍ່ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ.

**ມາດຕາ4: ຮອງປະທານຄະນະກຳມະການຂົນສົ່ງແຫ່ງຊາດແຕ່ລະທ່ານມີໜ້າທີ່ ແລະ ຂອບເຂດສິດຕົ້ນຕໍດັ່ງນີ້.**

4.1 ຊ່ວຍປະທານໃນການຊີ້ນຳກອງເລຂາ ແລະ ປະຕິບັດໜ້າທີ່ ແລະ ຂອບເຂດສິດຕ່າງໆຕາມການໝອບໝາຍຂອງປະທານ;

4.2 ຮອງປະທານຂອງຄະນະກຳມະການຂົນສົ່ງແຫ່ງຊາດມີໜ້າທີ່ເຂົ້າຮ່ວມກອງປະຊຸ່ມຄະນະກຳມະການຂົນສົ່ງແຫ່ງຊາດແຕ່ລະຄັ້ງ. ໃນກໍລະນີຕິດຂັດຕ້ອງແຈ້ງໃຫ້ປະທານຊາບ.

**ມາດຕາ 5: ກຳມະການ ຂອງຄະນະກຳມະການຂົນສົ່ງແຫ່ງຊາດ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:**

5.1 ຄົ້ນຄ້ວາ ແລະ ສະເໜີປັບປຸງແກ້ໄຂບັນດາວຽກງານ ທີ່ກ່ຽວຂ້ອງດ້ານການຂົນສົ່ງໃນຂະແໜງຂອງຕົນ;

5.2 ປະຕິບັດວຽກງານຕາມການມອບໝາຍຂອງປະທານ;

5.3 ກຳມະການຂອງຄະນະກຳມະການຂົນສົ່ງແຫ່ງຊາດ ທຸກຄົນມີໜ້າທີ່ມາເຂົ້າຮ່ວມກອງປະຊຸມຄະນະກຳມະການຂົນສົ່ງແຫ່ງຊາດແຕ່ລະຄັ້ງ. ໃນກໍລະນີຕິດຂັດສາມາດແຕ່ງຜູ້ຕ່າງໜ້າມາຮ່ວມໄດ້ແຕ່ຜູ້ກ່ຽວຕ້ອງມີສິດຕັດສິນບັນຫາໄດ້.

## ໝວດທີ III

## ກອງປະຊຸມຄະນະນກຳມະການຂົນສົ່ງແຫ່ງຊາດ

### ມາດຕາ 6: ກອງປະຊຸມຂອງຄະນະກຳມະການຂົນສົ່ງແຫ່ງຊາດ

ກອງປະຊຸມຂອງຄະນະກຳມະການຂົນສົ່ງແຫ່ງຊາດປະກອບດ້ວຍ:

6.1 ກອງປະຊຸມສາມັນຊຶ່ງຈະຈັດຂື້ນ 4 ຄັ້ງຕໍ່ປີໂດຍກຳນົດເອົາ ເດືອນກຸມພາ, ພຶດສະພາ, ສິງຫາ ແລະ ພະຈິກຕາມລຳດັບ;

6.2 ກອງປະຊຸມວິສາມັນຊຶ່ງຈະຈັດຂື້ນເມື່ອເຫັນວ່າມີຄວາມຈຳເປັນເພື່ອແກ້ໄຂບັນຫາຮີບດ່ວນຕາມການສະເໜີຂອງກອງເລຂາ ແລະ ດ້ວຍການເຫັນດີຂອງປະທານ;

6.3 ກອງປະຊຸມແຕ່ລະຄັ້ງ ຈະເປີດຂື້ນໄດ້ກໍ່ຕໍ່ເມື່ອມີກຳມະການເຂົ້າຮ່ວມບໍ່ຕ່ຳກ່ວາ 2/3 ຂອງຈຳນວນທັງໝົດ. ການຕັດສິນໃຈບັນຫາຕ່າງໆຈະຕ້ອງອີງໃສ່ສຽງສ່ວນຫຼາຍ, ໃນກໍລະນີມີສຽງເທົ່າກັນສຽງຂອງປະທານເປັນອັນຊີ້ຂາດ;

6.4

ວັນລັດຖະການ. ກອງປະຊຸມແຕ່ລະຄັ້ງຕ້ອງມີບົດບາດບັນທຶກກອງປະຊຸມ ແລະ ກຳເຫັນຂອງສຽງສ່ວນໜ້ອຍຕ້ອງບັນທຶກເຂົ້າໄວ້ໃນບົດບັນທຶກຂອງກອງປະຊຸມ.

**ມາດຕາ7: ເບ້ຍປະຊຸມຂອງຄະນະກຳມະການຂົນສົ່ງແຫ່ງຊາດ**

ສະມາຊິກຂອງຄະນະກຳມະການຂົນສົ່ງແຫ່ງຊາດທຸກທ່ານທີ່ໄດ້ເຂົ້າຮ່ວມປະຊຸມທັງສາມັນ ແລະ ວິສາມັນຂອງຄະນະກຳມະການຂົນສົ່ງແຫ່ງຊາດໃນແຕ່ລະຄັ້ງຈະໄດ້ຮັບເບ້ຍປະຊຸມຕາມທີ່ໄດ້ກຳນົດໄວ້ດັ່ງນີ້:

1. ປະທານ ຈະໄດ້ຮັບ 100,000 ກີບ (ນຶ່ງຮ້ອຍພັນກີບ)
2. ຮອງປະທານ ຈະໄດ້ຮັບ 80,000 ກີບ (ແປດສິບພັນກີບ)
3. ກຳມະການ ຈະໄດ້ຮັບ 70,000 ກີບ (ເຈັດສິບພັນກີບ)
4. ພະນັກງານກອງເລຂາຊຶ່ງມີໜ້າທີ່ເຂົ້າຮ່ວມປະຊຸມຈຳນວນ 3 ທ່ານ ຈະໄດ້ຮັບເງິນຜູ້ລະ 50,000 ກີບ (ຫ້າສິບພັນກີບ)

## ໝວດທີ IV

## ກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດ

**ມາດຕາ8: ໜ້າທີ່ ແລະ ຂອບເຂດສິດຂອງກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດ**

ກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດມີໜ້າທີ່ ແລະ ຂອບເຂດສິດດັ່ງຕໍ່ໄປນີ້:

8.1 ປະຕິບັດບັນດາໜ້າທີ່ວຽກງານຂອງຄະນະກຳມະການຂົນສົ່ງແຫ່ງຊາດທີ່ລະບຸໄວ້ໃນມາດຕາ 3 ແລະ 4 ຂອງດຳລັດນາຍົກລັດຖະມົນຕີ, ສະບັບເລກທີ 03/ນຍ ລົງວັນທີ 28 ມັງກອນ ປີ 2002 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຂົນສົ່ງແຫ່ງຊາດ;

8.2 ສັງລວມສະຖິຕິ ແລະ ວິເຄາະຂໍ້ມູນດ້ານການຂົນສົ່ງຢູ່ທັງພາຍໃນ ແລະ ຕ່າງປະເທດ;

8.3 ກະກຽມຂໍ້ມູນ, ເອກະສານ ແລະ ສິ່ງຈຳເປັນຕ່າງໆໃຫ້ປະທານ, ຮອງປະທານ ແລະ ກຳມະການເພື່ອກຽມເຂົ້າຮ່ວມກອງປະຊຸມ ແລະ ສຳມະນານຳອົງການຈັດຕັ້ງຕ່າງໆທັງຢູ່ພາຍໃນ ແລະ ຕ່າງປະເທດ;

8.4 ກະກຽມເນື້ອໃນ ແລະ ພິທີການໃຫ້ແກ່ກອງປະຊຸມທັງສາມັນ ແລະ ວິສາມັນຂອງຄະນະກຳມະການຕາມການຕົກລົງຂອງປະທານ, ພ້ອມນຳສົ່ງບັດເຊີນ, ເອກະສານເນື້ອໃນ

8.5 ສະເໜີປະທານຂໍເປີດກອງປະຊຸມວິສາມັນເມື່ອເຫັນວ່າມີຄວາມຈຳເປັນ;

8.6 ເຮັດບົດສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນ, ງວດ ແລະ ປີ ເພື່ອລາຍງານຕໍ່ປະທານ ຄະນະກຳມະການຂົນສົ່ງແຫ່ງຊາດຮັບຊາບເປັນປົກກະຕິ;

8.7 ເຂົ້າຮ່ວມກອງປະຊຸມ ຫຼື ການສຳມະນາທັງພາຍໃນ ແລະ ຕ່າງປະເທດໃນລະດັບວິຊາການຕາມພາລະບົດບາດຂອງຕົນ;

8.8 ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍຊົມເຊີຍ, ເລື່ອນຊັ້ນ, ຍົກຍ້າຍໜ້າທີ່, ປະຕິບັດວິໄນ ຫຼື ປົດຕຳແໜ່ງ ພະນັກງານ, ລັດຖະກອນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;

8.9 ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ຕ່າງໆ ທີ່ໄດ້ຮັບອະນຸມັດ ຈາກກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລະ ຈາກຄະນະກຳມະການຂົນສົ່ງ ແຫ່ງຊາດດ້ວຍຫັດສະນະປະຢັດມັດທະຍັດ ແລະ ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;

8.10 ປະຕິບັດໜ້າທີ່ແລະຂອບເຂດສິດອື່ນໆທີ່ຄະນະກຳມະການຂົນສົ່ງແຫ່ງຊາດມອບຫມາຍໃຫ້.

## ມາດຕາ9: ໂຄງປະກອບບຸກຄະລາກອນ

ກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດມີໂຄງປະກອບບຸກຄະລາກອນດັ່ງນີ້;

9.1 ກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດປະກອບດ້ວຍຫົວໜ້າກອງເລຂາ 1 ທ່ານ ຊຶ່ງ ແມ່ນຫົວໜ້າກົມຂົນສົ່ງ. ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງເປັນ ຫົວຫນ້າກອງເລຂາໂດຍຕຳແໜ່ງ, ຮັບຜິດຊອບໂດຍກົງຕໍ່ຄະນະກຳມະການຂົນສົ່ງແຫ່ງ ຊາດ ແລະ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການປະຕິບັດຫນ້າທີ່, ຂອບເຂດສິດຕາມທີ່ລະບຸໄວ້ໃນມາດ ຕາ 8 ຂອງຂໍ້ກຳນົດສະບັບນີ້ ແລະ ເປັນຜູ້ລົງລາຍເຊັນເອກະສານຕ່າງໆຂອງກອງເລຂາ. ໃນກໍລະນີຫົວຫນ້າກອງເລຂາຕິດຂັດດ້ວຍສາເຫດອັນຈຳເປັນໃດໜຶ່ງ, ຫົວໜ້າກອງເລຂາຕ້ອງມອບສິດໃຫ້ຮອງຫົວຫນ້າກອງເລຂາຜູ້ໃດໜຶ່ງຮັກສາການແທນ;

9.2 ກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດ ຍັງປະກອບມີ ຮອງຫົວຫນ້າ ກອງເລຂາຈຳນວນນຶ່ງຊຶ່ງແຕ່ງຕັ້ງຫຼືປົດຕຳແໜ່ງໂດຍ ລັດຖະມົນຕີ ວ່າການກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ຕາມການສະເໜີ ຂອງ ປະທານ ຄະນະກຳມະການຂົນສົ່ງແຫ່ງຊາດ, ບົນພື້ນຖານຄວາມເປັນເອກະພາບຂອງກົມຈັດຕັ້ງ

,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,

,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,

,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,,

ແລະ ລົງເລີກຮັບຜິດຊອບວຽກງານໃດນື່ງຕາມການມອບໝາຍຂອງຫົວໜ້າກອງເລຂາ.

**ມາດຕາ10: ໂຄງປະກອບການຈັດຕັ້ງ**

ກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດປະກອບມີຫ້ອງການກອງເລຂາຕັ້ງຢູ່ກົມຂົນສົ່ງ, ກະຊວງ ຄຂປກ, ມີຖານະທຽບເທົ່າພະແນກການອື່ນໆຂອງກົມຂົນສົ່ງ ໂດຍມີຫົວໜ້າ ແລະ ຮອງຫົວໜ້າຫ້ອງການ ແລະ ພະນັກງານຈຳນວນໜຶ່ງຕາມຄວາມເໝາະສົມ, ມີໜ້າທີ່ຊ່ວຍຫົວໜ້າ ແລະ ຮອງຫົວໜ້າກອງ ເລຂາໃນການປະຕິບັດໜ້າທີ່ວຽກງານຕາມໜ້າທີ່ ແລະ ຂອບເຂດສິດທີ່ລະບຸໄວ້ໃນມາດຕາ 8 ຂອງຂໍ້ກຳນົດສະບັບນີ້.

## ໝວດທີ່ V.

## ລະບອບວິທີເຮັດວຽກຂອງກອງເລຂາ ແລະ ຄະນະກຳມະການຂົນສົ່ງແຫ່ງຊາດ

**ມາດຕາ11: ກອງເລຂາແລະຄະນະກຳມະການຂົນສົ່ງແຫ່ງຊາດປະຕິບັດວຽກງານຕາມຫຼັກການດັ່ງຕໍ່ໄປນີ້:**

11.1 ປະຕິບັດລະບອບຫົວໜ້າດຽວຕາມລະບົບແບ່ງຂັ້ນຄຸ້ມຄອງບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະໃນທຸກໆຂັ້ນພ້ອມທັງມອບສິດອຳນາດໃນລະດັບອັນແນ່ນອນ ແລະ ສົມເຫດສົມຜົນໃນການແກ້ໃຂບັນຫາຕ່າງໆໃນຂອບເຂດຂອງແຕ່ລະຂັ້ນ ແລະ ຂອງແຕ່ລະຄົນ;

11.2 ທຸກການເຄື່ອນໄຫວຂອງກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດຕ້ອງຖືເອົາແນວທາງຍຸດທະສາດແຜນນະໂຍບາຍ, ນະໂຍບາຍລວມຂອງພັກ ແລະ ລັດຖະບານກ່ຽວກັບການຂົນສົ່ງທາງບົກ, ທາງນ້ຳ, ທາງທະເລ, ທາງອາກາດ ແລະ ທາງລົດໄຟເປັນທິດທາງ;

11.3 ເຮັດວຽກຢ່າງມີແຜນການ, ມີການກຳນົດເວລາ, ມີການຈັດຕັ້ງ, ມີການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ, ມີການຕິດຕາມເປັນປົກກະຕິ ແລະ ຕໍ່ເນື່ອງເພື່ອປະຕິບັດແນວທາງ ແລະ ແຜນນະໂຍບາຍ ຂອງພັກລັດຖະບານດັ່ງກ່າວຂ້າງເທິງໃຫ້ໄດ້ຮັບຜົນດີ;

11.4 ປະຕິບັດລະບອບປະຊຸມສະຫຼຸບຖອດຖອນບົດຮຽນ, ສ່ອງແສງ ແລະ ລາຍງານການເຄື່ອນໄຫວວຽກງານໃຫ້ປະທານຄະນະກຳມະການ ແລະ ລັດຖະມົນຕີກະຊວງ ຄຂປກ ຊາບຕາມກຳນົດເວລາ ແລະ ເປັນປະຈຳ;

## ໝວດທີ່ VI.

## ຂໍ້ບັນຍັດສຸດທ້າຍ

**ມາດຕາ 12: ຕາປະທັບ**

ກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດນຳໃຊ້ຕາປະທັບຂອງກົມຂົນສົ່ງ,ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 13: ການຈັດຕັ້ງປະຕິບັດ**

ຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ພະແນກ ຄຂປກ ປະຈຳແຂວງ, ນະຄອນຫຼວງ, ເຂດພິເສດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້,ໃຫ້ຄວາມສະດວກ ແລະ ການຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 14: ຜົນບັງຄັບໃຊ້**

ຂໍ້ກຳນົດສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາ ຂໍ້ກຳນົດ, ບົດບັນຍັດ ແລະ ລະບຽບການຕ່າງໆທີ່ຂັດກັບຂໍ້ກຳນົດສະບັບນີ້ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ